**28. ກອງປະຊຸມຜູ່ຖືຮຸ້ນແມ່ນຫຍັງ?**

ບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບ ຕ້ອງມີການຈັດຕັ້ງກອງປະຊຸມຜູ່ຖືຮຸ້ນໃນທຸກໆປີ, ຊຶ່ງບໍລິສັດຈົດທະບຽນຈະເປັນຜູ່ຮັບຜິດຊອບກະກຽມກ່ຽວກັບ ວາລະກອງປະຊຸມ, ໜັງສືແຈ້ງເຊີນ ແລະ ເອກະສານກ່ຽວຂ້ອງຕ່າງໆ ເພື່ອນຳສະເໜີຕໍ່ກອງປະຊຸມຜູ່ຖືຮຸ້ນພິຈາລະນາ. ດັ່ງນັ້ນ, ກອງປະຊຸມຜູ່ຖືຮຸ້ນ ຈຶ່ງແມ່ນກອງປະຊຸມສູງສຸດຂອງບໍລິສັດຈົດທະບຽນ. ກອງປະຊຸມຜູ່ຮຸ້ນຂອງບໍລິສັດຈົດທະບຽນ ປະກອບມີ 2 ປະເພດ ຄື: ກອງປະຊຸມສາມັນ ແລະ ກອງປະຊຸມວິສາມັນ.

ກອງປະຊຸມສາມັນ ຕ້ອງເປີດຂຶ້ນຢ່າງໜ້ອຍປີລະຄັ້ງ, ໄລຍະເວລາຂອງການເປີດກອງປະຊຸມ ແມ່ນກຳນົດໄວ້ໃນກົດລະບຽບຂອງບໍລິສັດ ເພື່ອຮັບຮອງເອົາບົດສະຫຼຸບລາຍງານ ກ່ຽວກັບການດຳເນີນທຸລະກິດ, ເອກະສານລາຍງານການເງິນ, ການແບ່ງເງິນປັນຜົນ, ແຜນການດຳເນີນທຸລະກິດຂອງບໍລິສັດ ເຫຼົ່ານີ້ເປັນຕົ້ນ.

ສຳລັບກອງປະຊຸມວິສາມັນ ແມ່ນເປີດຂຶ້ນເວລາໃດກໍ່ໄດ້ຖ້າເຫັນວ່າມີຄວາມຈຳເປັນ ຫຼື ມີເຫດການຮີບດ່ວນຕ້ອງແຈ້ງໃຫ້ຜູ່ຖືຮຸ້ນຊາບ ເຊັ່ນ: ການປ່ຽນແປງກົດລະບຽບ ຫຼື ຄະນະບໍລິຫານຂອງບໍລິສັດ, ການເພີ່ມ ຫຼື ຫຼຸດທຶນຈົດທະບຽນ ແລະ ການປ່ຽນແປງຜູ່ກວດສອບພາຍນອກ ເຫຼົ່ານີ້ເປັນຕົ້ນ. ກອງປະວິສາມັນ ຈະສາມາດເປີດຂຶ້ນໄດ້ ໃນກໍລະນີດັ່ງຕໍ່ໄປນີ້: (1) ມີຜູ່ອຳນວຍການເກີນກວ່າເຄິ່ງໜຶ່ງ ເຫັນດີໃຫ້ເປີດກອງປະຊຸມຜູ່ຖືຮຸ້ນ; (2) ຜູ່ຖືຮຸ້ນຮ້ອງຟ້ອງຕໍ່ສານ ແລະ ສານສັ່ງໃຫ້ເປີດກອງປະຊຸມ; (3) ມີການຮ້ອງຂໍຂອງຜູ່ຖືຮຸ້ນ ຊຶ່ງມີຈຳນວນຮຸ້ນຢ່າງໜ້ອຍເທົ່າກັບຊາວສ່ວນຮ້ອຍ ຂອງຈຳນວນຮຸ້ນທັງໝົດທີ່ຖອກແລ້ວ.